**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---------- ooo ----------

ກະຊວງການເງິນ                                        ເລກທີ 2095/ກງ

ນະຄອນຫຼວງວຽງຈັນ, ລົງວັນທີ 26 ກັນຍາ 2011

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການກະຊວງການເງິນ

## ວ່າດ້ວຍການນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າເສຍພາສີ-ອາກອນ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19 ຕຸລາ 2007;
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 1398/ກງ, ລົງວັນທີ 16 ມິຖຸນາ 2010 ວ່າດ້ວຍມູນຄ່າແຈ້ງພາສີສິນຄ້າຂາເຂົ້າ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານມູນຄ່າແຈ້ງພາສີໃຫ້ສອດຄ່ອງກັບຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະ ການຄ້າຂອງອົງການການຄ້າໂລກ 1994 (GATT/WTO) ຫຼື ຂໍ້ຕົກລົງວ່າດ້ວຍການກຳນົດມູນຄ່າແຈ້ງພາສີຂອງອົງການໆຄ້າໂລກ (CVA), ທັງເປັນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຄ້າ.

**ລັດຖະມົນຕີວ່າການກະຊວງການເງິນຕົກລົງ:**

**ມາດຕາ 1. ເຫັນດີໃຫ້ນຳໃຊ້ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ**, ປະກອບມີ 6 ແບບຟອມຄື:

1. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້ານຳໃຊ້ມູນຄ່າຊື້ຂາຍສິນຄ້າ, ລະຫັດ GATT/ກພສ-01 ແລະ ໃບຊ້ອນທ້າຍໃບແຈ້ງມູນຄ່າແຈ້ງພາສີລະຫັດ GATT/ກພສ-01/01;
2. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້ານຳໃຊ້ມູນຄ່າຊື້ຂາຍສິນຄ້າຄືກັນ, ລະຫັດ GATT/ກພສ-02;
3. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້ານຳໃຊ້ມູນຄ່າຊື້ຂາຍສິນຄ້າຄ້າຍຄືກັນ, ລະຫັດ GATT/ກພສ-03;
4. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້ານຳໃຊ້ການຫັກລົບມູນຄ່າສິນຄ້າ, ລະຫັດ GATT/ກພສ-04;

5. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້ານໍາໃຊ້ການຄໍານວນມູນຄ່າສິນຄ້າ, ລະຫັດ GATT/ກພສ-05;
6. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້ານໍາໃຊ້ວິທີສົມເຫດສົມຜົນ, ລະຫັດ GATT/ກພສ-06;

## ມາດຕາ 2. ການນໍາໃຊ້ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ

1. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ແມ່ນເອກະສານປະກອບ ໃບແຈ້ງພາສີເປັນລາຍລະອຽດ ນໍາໃຊ້ສະເພາະການນໍາເຂົ້າສິນຄ້າເຄື່ອງຂອງເຂົ້າມາ ສປປລາວ ໃນລະບອບເສຍພາສີ-ອາກອນ;
2. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ຈະບໍ່ຖືກນໍາໃຊ້ສໍາລັບສິນຄ້າສົ່ງອອກ; ສິນຄ້ານໍາເຂົ້າຍົກເວັ້ນ, ຫຼຸດຜ່ອນ, ງົດເກັບຄ່າພາສີ-ອາກອນ; ສິນຄ້າຜ່ານແດນສາກົນ; ສິນຄ້ານໍາເຂົ້າເສຍພາສີ-ອາກອນທີ່ມີມູນຄ່າຕໍ່າກວ່າ 5 ລ້ານກີບ ຕໍ່ການຂົນສົ່ງຕໍ່ຖ້ຽວ ແລະ ເຄື່ອງຂອງຕິດຕົວຜູ້ໂດຍສານ;
3. ຜູ້ນໍາເຂົ້າເປັນຜູ້ພິຈາລະນາ ເລືອກນໍາໃຊ້ວິທີການກໍານົດມູນຄ່າແຈ້ງພາສີ ໜຶ່ງໃນຈໍານວນ 6 ວິທີການຕາມລໍາດັບ ແລະ ປະກອບຂໍ້ມູນລົງໃນໃບແຈ້ງມູນຄ່າ ແຈ້ງພາສີ ຕາມວິທີທີ່ໄດ້ເລືອກນໍາໃຊ້ ແລະ ຄັດຕິດໃບແຈ້ງພາສີເປັນລາຍລະອຽດຍື່ນຕໍ່ເຈົ້າໜ້າທີ່ພາສີ ເພື່ອກວດສອບ.
4. ໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າປະກອບມີ 3 ສະບັບ, 01 ສະບັບ ສໍາລັບຜູ້ນໍາເຂົ້າ, 02 ສະບັບ ສໍາລັບລັດຖະການພາສີ.
5. ມອບໃຫ້ກົມພາສີອອກບົດແນະນໍາ ໃນການປະກອບຂໍ້ມູນໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ແລະ ຈັດພິມໃບແຈ້ງມູນຄ່າແຈ້ງພາສີຂາເຂົ້າ ເພື່ອຈໍາໜ່າຍແຈກຢາຍ ໃຫ້ແກ່ຜູ້ປະກອບການ. ພ້ອມນັ້ນກໍໃຫ້ເອົາໃຈໃສ່ຈັດຕັ້ງເຜີຍແຜ່ລະບຽບການນໍາໃຊ້ໃບແຈ້ງມູນຄ່າ ແຈ້ງພາສີຂາເຂົ້າໃຫ້ແກ່ເຈົ້າໜ້າທີ່ພາສີ ແລະ ພາກສ່ວນທຸລະ ກິດຢ່າງທົ່ວເຖິງ.

## ມາດຕາ 3. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງການເງິນ**